*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດແປດ*

# ໂຣກໝາກສຸກແລະໂຣກງູສວັດ

*ໂຣກໝາກສຸກແມ່ນການຕິດແປດຂອງເຊື້ອໄວຣັສຊຶ່ງອາດກຳເຣີບຂຶ້ນມາໄດ້ໃໝ່ອີກໃນລັກສນະໂຣກງູສວັດ. ຂໍແນະນຳໃຫ້ເດັກນ້ອຍແລະຜູ້ໃຫຍ່ທຸກຄົນທີ່ບໍ່ມີພູມຕ້ານທານໃຫ້ສັກຢາປ້ອງກັນ.*

## ໂຣກໝາກສຸກແມ່ນຫຍັງ?

- ໂຣກໝາກສຸກແມ່ນການເຈັບປ່ວຍຍ້ອນເຊື້ອໄວຣັສຊນິດນຶ່ງຊຶ່ງເກີດຈາກເຊື້ອໄວຣັສທີ່ເຮັດໃຫ້ຜິວໜັງເປັນຕຸ່ມໂພງຍ້ອນ ເຊື້ອໄວຣັສງູສວັດ (ຫຼືທີ່ຮູ້ກັນອີກຊື່ນຶ່ງວ່າເຊື້ອໄວຣັສ Varicella-Zoster).
- ຖ້າເປັນກັບເດັກນ້ອຍອາການກໍບໍ່ຄ່ອຍຮ້າຍແຮງປານໃດ.
- ໂຣກໝາກສຸກທີ່ເປັນກັບຜູ້ໃຫຍ່ແລະກັບຄົນທີ່ພູມຄຸ້ມກັນອ່ອນຕົວລົງນັ້ນອາດຮ້າຍແຮງໄດ້.
- ການຕິດເຊື້ອລະຫວ່າງຖືພາອາດເຮັດໃຫ້ເດັກໃນທ້ອງມີອາການຜິດຮູບຮ່າງ, ຜິວໜັງເປັນແປ້ວ, ແລະເກີດບັນຫາອື່ນໆກັບ ເດັກນ້ອຍໄດ້.
- ກ່ອນມີການສັກຢາກັນໂຣກໃຫ້ຢ່າງເປັນປົກກະຕິຊຶ່ງເລີ້ມໃນປີ 2006, ໂຣກໝາກສຸກແມ່ນໂຣກທີ່ເປັນກັນຢ່າງແຜ່ຫຼາຍ. ຈຳນວນຄົນເປັນໂຣກໝາກສຸກມີທ່າທີວ່າຈະຫຼຸດລົງ ເພາະວ່າມີຄົນຈຳນວນຫຼາຍຂຶ້ນ ໄດ້ຮັບການສັກຢາປ້ອງກັນ.

## ໂຣກນີ້ມີອາການຫຍັງແດ່?

- ໂຣກໝາກສຸກຈະເລີ້ມຕົ້ນດ້ວຍການມີໄຂ້ເລັກນ້ອຍຢ່າງທັນທີ, ຂີ້ມູກຍ້ອຍ, ຮູ້ສຶກບໍ່ຄ່ອຍສະບາຍ ທົ່ວໄປໃນເນື້ອຕົວ ແລະ ເກີດຜື່ນແດງຂຶ້ນທີ່ຜິວໜັງ
- ຕາມປົກກະຕິແລ້ວຜື່ນນີ້ຈະເລີ້ມເປັນຈຸດນູນນ້ອຍໆແລ້ວກາຍເປັນຕຸ່ມໂພງ ແລະ ຕົກເກັດ.
- ຜື່ນນີ້ຈະປາກົດຢູ່ເປັນເວລາສາມຫາສີ່ມື້. ຮອຍຂອງຜື່ນຈະປ່ຽນແປງໄປຕາມລະຍະຂອງ ການເຕີບໂຕຂອງເຊື້ອໂຣກ.
- ສ່ວນຫຼາຍ ອາການຈະກຳເຣີບຂຶ້ນ ສອງອາທິດ ຫຼັງຈາກທີ່ໄດ້ຕິດເຊື້ອໄວຣັສແລ້ວ.
- ຄົນສ່ວນຫຼາຍຈະເຊົາໄປເອງໂດຍບໍ່ມີອາການແຊກຊ້ອນແຕ່ຢ່າງໃດ, ແຕ່ບາງຄັ້ງການຕິດເຊື້ອນີ້ອາດເຮັດໃຫ້ເກີດມີອາ ການແຊກຊ້ອນຮ້າຍແຮງ, ເຊັ່ນໂຣກປອດບວມແລະສມອງອັກເສບ. ນ້ອຍທີ່ສຸດ ທີ່ການຕິດເຊື້ອນີ້ເຮັດໃຫ້ເຖິງແກ່ຊີວິດ ໄດ້.

## ໂຣກນີ້ແຜ່ພາຍແນວໃດ?

- ໃນລະຍະຕົ້ນຂອງການເຈັບປ່ວຍ, ເຊື້ອໄວຣັສແຜ່ພາຍຈາກການໄອ.
- ໃນລະຍະຫຼັງໆຂອງການເຈັບປ່ວຍ, ເຊື້ອໄວຣັສແຜ່ພາຍໂດຍການຈັບຕ້ອງນ້ຳຈາກຕຸ່ມໂພງໂດຍຕົງ.
- ເຊື້ອໂຣກນີ້ຈະຕິດຕໍ່ໄດ້ຢ່າງງ່າຍດາຍສຳລັບຄົນທີ່ບໍ່ເຄີຍເປັນໂຣກໝາກສຸກມາກ່ອນຫຼືສຳລັບຄົນທີ່ບໍ່ມີພູມຄຸ້ມກັນ.
- ຄົນເຮົາຈະຕິດເຊື້ອນັບຈາກມື້ທຳອິດຫຼືສອງມື້ກ່ອນຜື່ນຈະເລີ່ມປາກົດ (ຊຶ່ງໝາຍເຖິງ, ລະຍະຂີ້ມູກ ຍ້ອຍ) ແລະຈົນເຖິງຫ້າມື້ຫຼັງຈາກນັ້ນ (ເວລາທີ່ຕຸ່ມໂພງເລີ່ມແຫ້ງຫຼືຕົກເກັດ)
- ການເປັນໂຣກໝາກສຸກຈະກໍ່ໃຫ້ເກີດພູມຄຸ້ມກັນ ແລະ ຄົນເຮົາກໍ່ບໍ່ຄ່ອຍເປັນໂຣກໝາກສຸກສອງເທື່ອ.

## ໃຜແດ່ສ່ຽງຕໍ່ການເປັນໂຣກນີ້?

- ຄົນໃດກໍຕາມທີ່ຍັງບໍ່ເຄີຍເປັນໂຣກໝາກສຸກມາກ່ອນຫຼືບໍ່ໄດ້ຮັບການສັກຢາປ້ອງກັນມາກ່ອນສາມາດເປັນໂຣກໝາກສຸກໄດ້.
- ຄົນທີ່ເຄີຍມີປະວັດເປັນໂຣກໝາກສຸກມາກ່ອນສ່ວນຫຼາຍກໍຈະມີຈະພູມຄຸ້ມກັນເຊື້ອໄວຣັສນີ້ແລ້ວ. ແມ່ນແຕ່ຜູ້ໃຫຍ່ທີ່ ບໍ່ເຄີຍ ມີປະວັດເປັນໂຣກນີ້ມາກ່ອນກໍເປັນໄປໄດ້ວ່າອາດມີພູມຄຸ້ມກັນແລ້ວເຊັ່ນກັນ (ເພາະວ່າການຕິດເຊື້ອ ມາ ແຕ່ກ່ອນນັ້ນ ເປັນ ຄ່ອຍບໍ່ຮ້າຍແຮງ). ບາງເທື່ອ ແພດກໍຈະເອົາເລືອດໄປກວດເບິ່ງ ເພື່ອຈະໄດ້ຮູ້ວ່າຄົນໆນັ້ນຈຳເປັນຈະຕ້ອງໄດ້ສັກຢາກັນບໍ.

## ຈະປ້ອງກັນເຊື້ອໂຣກນີ້ໄດ້ແນວໃດ?

- ປັດຈຸບັນນີ້ ທາງການແພດໄດ້ແນະນຳໃຫ້ມີການຢັກສາແກ່ເດັກທຸກໆຄົນທີ່ມີອາຍຸ 18 ເດືອນ ແລະ ເດັກ ທີ່ ເຂົ້າຮຽນມັທຍົມ ປີທຳອິດ ຊຶ່ງຍັງບໍ່ທັນໄດ້ສັກຢາປ້ອງກັນມາກ່ອນແລະ ຜູ້ທີ່ບໍ່ທັນເຄີຍເປັນໂຣກໝາກສຸກ ມາກ່ອນ.
- ນອກນີ້ ທາງການແພດຍັງໄດ້ແນະນຳໃຫ້ມີການສັກຢາແກ່ຜູ້ທີ່ອາຍຸ 14 ປີ ແລະ ອາຍຸເກີນນັ້ນ ທີ່ຍັງບໍ່ມີພູມຄຸ້ມກັນ. ການ ສັກຢາປ້ອງກັນນີ້ແບ່ງເປັນສອງຄັ້ງ, ແຕ່ລະຄັ້ງຫ່າງກັນປະມານ 1 ຫາ 2 ເດືອນ. ການແນະນຳແມ່ນເນັ້ນໜັກເປັນພິເສດ ແກ່ຜູ້ທີ່ມີຄວາມສ່ຽງສູງ, ຕົວຢ່າງ, ພະນັກງານດ້ານດູແລ ສຸຂພາບ, ຄົນທີ່ຢູ່ກັບເດັກນ້ອຍຫຼືເຮັດວຽກກ່ຽວກັບເດັກນ້ອຍ, ແມ່ຍິງທີ່ວາງແຜນຕັ້ງທ້ອງ, ແລະ ຄົນໃນຄອບຄົວທີ່ພົວພັນກັບຜູ້ທີ່ພູມຄຸ້ມກັນຕ່ຳ.
- ຄົນທີ່ເປັນໂຣກໝາກສຸກຢູ່ຕ້ອງບໍ່ພົວພັນກັບຄົນອື່ນ (ແລະ ບໍ່ໄປບ່ອນຝາກເດັກຫຼືໂຮງຮຽນ) ຈົນກວ່າຢ່າງນ້ອຍຫ້າມື້ ຫຼັງຈາກ ຜື່ນເລີ່ມປາກົດແລະຕຸ່ມໂພງຕ່າງໆແຫ້ງໝົດ.
- ຄົນທີ່ເປັນໂຣກໝາກສຸກຕ້ອງອັດດັງແລະປາກເວລາໄອຫຼືຈາມ, ເອົາເຈ້ຍທິຊຊູທີ່ເຊັດແລ້ວຖິ້ມຢ່າງປອດພັຍ, ລ້າງມື ໃຫ້ສະອາດແລະບໍ່ໃຊ້ຖ້ວຍບ່ວງ, ກິນອາຫານຮ່ວມ ກັບຄົນອື່ນ ຫຼື ດື່ມຮ່ວມຈອກກັນ.
- ແມ່ຍິງຖືພາຕ້ອງຫຼີກເວັ້ນຄົນທີ່ເປັນໂຣກໝາກສຸກ ຫຼື ເປັນງູສວັດ ແລະ ຕ້ອງໄປຫາໝໍທັນທີ ຖ້າວ່າຕົນໄດ້ຢູ່ໃກ້ຊິດພົວພັນ ກັບ ຄົນທີ່ເປັນໂຣກນີ້.

- ເດັກນ້ອຍທີ່ມີບັນຫາເລື່ອງພູມຄຸ້ມກັນ (ຕົວຢ່າງ, ໂຣກເມັດເລືອດຂາວຫຼາຍຜິດປົກກະຕິ ຫຼື leukaemia) ຫຼື ຜູ້ທີ່ຮັບການ ປິ່ນປົວແບບຄີໂມ ຕ້ອງຫຼີກເວັ້ນຄົນທີ່ເປັນໂຣກໝາກສຸກ ຫຼື ງູສວັດ ເພາະວ່າການຕິດເຊື້ອອາດເກີດອາການຮ້າຍແຮງ ໄດ້ ໂດຍສະເພາະກັບຄົນຈຳພວກນີ້.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ສ່ວນຫຼາຍແລ້ວ ໂຣກນີ້ຈະກວດຫາໄດ້ໂດຍເບິ່ງຕາມອາການທີ່ເກີດຂຶ້ນ ແລະ ການປາກົດຂອງຜື່ນ. ບາງຄັ້ງ ການກວດຫາໂຣກ ນີ້ ອາດຢັ້ງຢືນໄດ້ຈາກການເອົາຕົວຢ່າງຈາກຜື່ນຫຼືຈາກເລືອດໄປກວດເບິ່ງ.

## ໂຣກງູສວັດແມ່ນຫຍັງ?

- ໂຣກງູສວັດເກີດຍ້ອນການຟື້ນຟູຂຶ້ນມາອີກຂອງເຊື້ອໄວຣັສທີ່ເຮັດໃຫ້ເປັນໂຣກໝາກສຸກ, ໂດຍທົ່ວໄປແມ່ນເປັນກັບຜູ້ໃຫຍ່ແລະຫຼາຍໆປີຫຼັງຈາກທີ່ເຈັບປ່ວຍເປັນໂຣກໝາກສຸກຄັ້ງທຳອິດ.
- ຜູ້ປ່ວຍຈະມີຜື່ນທີ່ເຈັບປວດຄ້າຍກັບໂຣກໝາກສຸກ ແລະ ເປັນຈຸດວົງນ້ອຍໆຕາມຜິວໜັງ, ຕາມປົກກະຕິຈະເປັນໃສ່ຢູ່ຂ້າງດຽວຂອງຮ່າງກາຍ.
- ອາການປວດແລະເຈັບແປບທີ່ເກີດຈາກຜື່ນນັ້ນອາດເປັນຢູ່ຫຼາຍອາທິດຫຼືຫຼາຍເດືອນ ຫຼັງຈາກຕຸ່ມ ເຊົາ ແລ້ວ. ອາການດັ່ງນີ້ ເອີ້ນວ່າ ອາການປວດປະສາດຫຼັງຈາກເປັນຕຸ່ມໂພງ (post-herpetic neuralgia).
- ເຊື້ອໄວຣັສນີ້ອາດແພ່ຜາຍໄດ້ໂດຍການຈັບຕ້ອງຜື່ນທີ່ຜິວໜັງຂອງຄົນຕິດເຊື້ອໂດຍກົງ. ການຈັບຕ້ອງນີ້ ຈະເຮັດໃຫ້ຜູ້ທີ່ບໍ່ມີພູມຄຸ້ມກັນເປັນໂຣກໝາກສຸກໄດ້.
- ໂຣກງູສວັດມັກເປັນກັບຜູ້ທີ່ພູມຄຸ້ມກັນຕ່ຳ.

## ຈະປິ່ນປົວໂຣກນີ້ຢ່າງໃດ?

ໂຣກງູສວັດສາມາດປິ່ນປົວໄດ້ໂດຍການໃຊ້ຢາຕ້ານເຊື້ອໄວຣັສຊະນິດພິເສດເຊັ່ນຢາ acyclovir. ໝໍປະຈຳ ຄອບຄົວຂອງທ່ານ ສາມາດ ໃຫ້ຄຳແນະນຳແກ່ທ່ານໄດ້ເຖິງວິທີ ທີ່ຈະຊ່ວຍຜ່ອນຄາຍອາການບໍ່ສະບາຍທີ່ເກີດ ຈາກການຕິດເຊື້ອນີ້. ສ່ວນໂຣກໝາກສຸກ ນັ້ນຈະເຊົາໄປເອງໂດຍບໍ່ຕ້ອງປິ່ນປົວຫຍັງ.

## ທາງການສາທາຣະນະສຸກມີທ່າທີຢ່າງໃດກ່ຽວກັບໂຣກນີ້?

ປັດຈຸບັນນີ້ ບໍ່ຈຳເປັນຕ້ອງລາຍງານໂຣກໝາກສຸກໃຫ້ທາງການຮູ້ໂດຍສະເພາະໃນຣັດ NSW ແຕ່ວ່າສະພາບການຈະຖືກຄວບຄຸມໂດຍເບິ່ງຈາກຈຳນວນຂອງຄົນເຈັບທີ່ໄປຜແນກສຸກເສີນແລະຈຳນວນຄົນເຈັບ ທີ່ເຂົ້າໂຮງໝໍຍ້ອນ ໂຣກໝາກສຸກ ຫຼື ງູສວັດ.

- ການສັກຢາກັນໂຣກຈະປ້ອງກັນບໍ່ໃຫ້ເປັນໂຣກໝາກສຸກໄດ້, ເຖິງແມ່ນວ່າຈະສັກໃນມື້ທີ່ຫ້າຫຼັງຈາກທີ່ ໄດ້ຕິດເຊື້ອແລ້ວ.

- ການສັກຢາແບບປ້ອງກັນລະຍະສັ້ນ ໂດຍຢາ varicella-zoster immunoglobulin (VZIG) - ຊຶ່ງໄດ້ມາ ຈາກ ພູມຄຸ້ມກັນພຍາດໃນເລືອດທີ່ຄົນບໍຣິຈາກມານັ້ນ - ສາມາດປ້ອງກັນການເຈັບປ່ວຍໃຫ້ແກ່ ຜູ້ທີ່ມີຄວາມສ່ຽງສູງຕໍ່ການ ເກີດພຍາດແຊກຊ້ອນ. ການສັກຢານີ້ຕ້ອງໄດ້ສັກໃຫ້ພາຍໃນ 96 ຊົ່ວໂມງ ຫຼັງຈາກຕິດເຊື້ອໄວຣັສຖ້າຕ້ອງການ ໃຫ້ການ ສັກຢາໄດ້ຜົນ. ຄົນທີ່ມີຄວາມສ່ຽງສູງຕໍ່ການເກີດພຍາດແຊກຊ້ອນເມື່ອຕິດເຊື້ອນີ້ແມ່ນແມ່ຍິງຖືພາທີ່ບໍ່ເຄີຍເປັນໂຣກ ໝາກສຸກມາກ່ອນ ແລະ ບໍ່ມີພູມຄຸ້ມກັນ, ແອນ້ອຍເກີດໃໝ່, ແລະ ຄົນເຈັບບາງຈຳພວກທີ່ມີພູມຄຸ້ມກັນຕ່ຳ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**www.health.nsw.gov.au**